# ທີມງານໃຫ້ຄວາມຮູ້ດ້ານຕ່າງໆ ໃນ Family Care

## ໃຜແດ່ຢູ່ໃນທີມງານຜູ້ມີຄວາມຮູ້ຫຼາຍສາຂາຂອງທ່ານ?

ເມື່ອທ່ານເຂົ້າຮ່ວມໃນໂຄງການ Family Care, ທີມງານກໍ່ຈະມາຮ່ວມກັນເພື່ອຊ່ວຍທ່ານລະບຸຄວາມຊ່ວຍເຫຼືອທີ່ທ່ານຕ້ອງການແລະເຮັດວຽກຮ່ວມກັບທ່ານເພື່ອຈັດແຈງການບໍລິການດູແລໄລຍະຍາວຂອງທ່ານ. ທ່ານເປັນຜູ້ທີ່ກຳລັງເຂົ້າຮ່ວມໃນທີມທີ່ລວມເຖິງ, ທີ່ຢ່າງໜ້ອຍ, ມີຜູ້ຈັດການດ້ານການເບິ່ງແຍງແລະນາງພະຍາບານທີ່ມີໃບອະນຸຍາດ. ທ່ານສາມາດເລືອກທີ່ຈະລວມສະມາຊິກໃນຄອບຄົວຫຼືຄົນທີ່ທ່ານຮັກເຂົ້າໃນທີມຂອງທ່ານໄດ້. ບາງຄັ້ງຜູ້ຄົນກໍ່ເລືອກຜູ້ມີອາຊີບອື່ນໆ, ເຊັ່ນວ່າພະນັກງານດູແລສ່ວນບຸກຄົນ, ໃຫ້ມາເຂົ້າຮ່ວມເປັນສະມາຊິກທີມ. ທີມງານນີ້ຖືກເອີ້ນວ່າ "ທີມງານຜູ້ມີຄວາມຮູ້ຫຼາຍສາຂາ" ("interdisciplinary team").

## ທີມງານຜູ້ມີຄວາມຮູ້ຫຼາຍສາຂາຂອງທ່ານເຮັດຫຍັງ?

ທີມງານເຮັດປະເມີນຄວາມຕ້ອງການຂອງທ່ານຢ່າງສົມບູນແລະພັດທະນາແຜນການບໍລິການເພື່ອຕອບສະໜອງຄວາມຕ້ອງການເຫຼົ່ານັ້ນ. ການບໍລິການທີ່ໄດ້ລະບຸໄວ້ໃນແຜນການຂອງທ່ານແມ່ນເຮັດໄວ້ສະເພາະທ່ານແລະເນັ້ນໜັກໃສ່ວິທີທີ່ມີປະສິດທິພາບແລະປະຫຍັດຄ່າໃຊ້ຈ່າຍທີ່ສຸດເພື່ອຕອບສະໜອງຄວາມຕ້ອງການຂອງທ່ານ. ຜູ້ຈັດການດ້ານການດູແລແລະນາງພະຍາບານທີ່ມີໃບອະນຸຍາດກໍ່ຈະອະນຸຍາດໃຫ້ຈ່າຍຄ່າບໍລິການທີ່ໄດ້ຮັບອະນຸມັດຂອງທ່ານ, ແລະກວດກາຄຸນນະພາບຂອງບໍລິການທີ່ທ່ານໄດ້ຮັບ.

ນີ້ແມ່ນຕົວຢ່າງຂອງທີມງານຜູ້ມີຄວາມຮູ້ຫຼາຍສາຂາໃນໂຄງການ Family Care. ບຸກຄົນທີ່ຢູ່ໃນສູນກາງແມ່ນທ່ານ. ບຸກຄົນທີ່ຢູ່ໃນກ່ອງທີ່ມີສີມ້ານໆ ແມ່ນຄົນທີ່ທ່ານເລືອກໃຫ້ເຂົ້າຮ່ວມທີມງານຂອງທ່ານ:






Wisconsin Department of Health Services
DHS/P-00088EL (03/2016)